

# ຮ້ານຜະລິດ ແລະ ຈາໜ່າຍໝາກເບັງທຸກ ຊະນິດ

ຂ້າພະເຈົ້າຊື່ ນາງ ສາຍສະໝອນ ພິມມະຈັກ, ອາຍຸ 30 ປີ, ຮຽນຈົບ ມໍ 7. ເຂົ້າຮ່ວມກິດຈະກຳ ສົ່ງເສີມໄວໜຸ່ມໃຫ້ເຂົ້າເຖິງວຽກເຮັດງານທຳ ແລະ ເປັນຜູ້ລິເລີ່ມທຸລະກິດ ດ້ານກະສິກຳ ຍ້ອນວ່າ ຢາກພັດທະນາສີມືຂອງຕົວເອງໃນການເຮັດໝາກເບັງ, ຢາກໃຫ້ຕົວເອງ ແລະ ຄອບຄົວມີລາຍຮັບ-ມີອາຊີບທີ່ໝັ້ນຄົງ.

**ທຶນທີ່ໄດ້ຮັບ:** ໄດ້ຮັບທຶນຈາກໂຄງການໃນປີ 2019 ທັງໝົດແມ່ນ 5,130,000 ກີບ. (ຫ້າລ້ານໜຶ່ງແສນສາມສິບພັນກີບຖ້ວນ).

**ປະເພດທຸລະກິດ:**

ທຸລະກິດທີ່ຂ້າພະເຈົ້າເຮັດແມ່ນໝາກເບັງ, ທຸລະກິດດັ່ງກ່າວນີ້ແມ່ນເປັນການຂະຫຍາຍທຸລະກິດທີ່ມີຢູ່ແລ້ວ ທີ່ເລືອກເຮັດທຸລະກິດນີ້ຍ້ອນວ່າ ເຄີຍເຮັດມາກ່ອນແລ້ວ, ກ່ອນໄດ້ຮັບທຶນຂ້າພະເຈົ້າຫຍິບໝາກເບັງບູຊາ ຂາຍທຸກໆວັນສິນ ຫຼັງຈາກໄດ້ເຂົ້າຮ່ວມກິດຈະກຳແລ້ວ ຂ້າພະເຈົ້າໄດ້ຝຶກງານ ຊຶ່ງການຝຶກງານແມ່ນຂ້າພະເຈົ້າເລືອກຝຶກກ່ຽວກັບການ ປູກດອກໄມ້ປະດັບ ແລະ ການເຮັດໝາກເບັງສຳລັບງານດອງ, ງານສູ່ຂວັນ, ງານພິທີຕ່າງໆ ເຮັດໃຫ້ມີຄວາມຮູ້, ຄວາມຊຳນານຫຼາຍຂຶ້ນ.

**ການນຳໃຊ້ທຶນ:**

ໃນປີ 2019 ໄດ້ນຳໃຊ້ທຶນ ມາຊື້ອຸປະກອນສຳລັບໄວ້ເຮັດຊຸດໝາກເບັງພາຂວັນງານຕ່າງໆ ເຊັ່ນ: ຂັນ, ພາຖາດ, ໂອ, ໄມ້ຂັດ, ມີດຕັດ, ດອກໄມ້ຢາງ ແລະ ໄດ້ນຳມາເຮັດສວນດອກດາວເຮືອງ ຂະໜາດ 5 x 10 ແມັດ.

**ເປົ້າໝາຍ:**

ໃນການເຮັດທຸລະກິດ ສຳລັບປີ 2020 ແມ່ນຜະລິດໝາກເບັງພາຂວັນ ຂາຍໃຫ້ໄດ້ 20 -30 ຊຸດ, ໝາກເບັງບູຊາ 500 ຄູ່ ແລະ ຂາຍດອກດາວເຮືອງ 100-200 ກິໂລ

**ບັນຫາທີ່ພົບພໍ້:**

ສະພາບອາກາດບໍ່ເອື້ອອຳນວຍ ລະດູຝົນ ມີຝົນຕົກຫຼາຍເຮັດໃຫ້ດອກດາວເຮືອງເນົ່າ ເຮັດໃຫ້ປູກດອກດາວເຮືອງບໍ່ໄດ້ຫຼາຍ ແກ້ໄຂໂດຍການຊື້ຜ້າກັນແສງມາບັງ ເພື່ອບໍ່ໃຫ້ຝົນຖືກດອກດາວເຮືອງຫຼາຍ, ບາງຄັ້ງກໍໄດ້ຊື້ດອກໄມ້ຈາກແມ່ຄ້າຜູ້ອື່ນມາເຮັດໝາກເບັງ. ລາຄາໃບຕອງແພງ, ມີຄົນເຮັດຫຼາຍເກລາຄາກັນ ແລະ ຕົ້ນທຶນເພີ່ມຂຶ້ນແຕ່ຕ້ອງໄດ້ຂາຍລາຄາເກົ່າ.

**ລາຍຮັບຍັງບໍ່ໄດ້ຫັກຄ່າໃຊ້ຈ່າຍ:**

- ໃນປີ 2020, ໄດ້ໝາກເບັງນ້ອຍບູຊາວັນສິນ 420 ຄູ່, ໝາກເບັງໃຫຍ່ບູຊາວັນສິນ 345 ຄູ່, ໝາກເບັງພາຂວັນ 4 ໜ່ວຍ, ດອກດາວເຮືອງ 12 ກິໂລ ລວມເປັນເງິນທັງໝົດ 6,330,000 ກີບ.
- ໃນປີ 2021 ຂາຍດອກດາວເຮືອງ, ຂາຍຫມາກເບັງວັນສິນນ້ອຍ-ໃຫຍ່, ຊຸດຫມາກເບັງພາຂ້ວນ, ລວມເປັນເງິນທັງໝົດ 3,400,000ກີບ ປັດຈຸບັນແມ່ນລົງຂາຍທາງອອນລາຍນຳ, ວາງຂາຍໜ້າຮ້ານ ແລະ ຈັດສົ່ງຟຣີໃນເຂດເທດສະບານ.



